FoodShare WISCONSIN

A Recipe for Good Health



# ຂໍ້ມູນກ່ຽວກັບການທົບທວນການຄວບຄຸມຄຸນນະພາບຂອງ FOODSHARE

## INFORMATION ABOUT FOODSHARE QUALITY CONTROL REVIEWS

## ການທົບທວນການຄວບຄຸມຄຸນນະພາບຂອງ FoodShare ແມ່ນຫຍັງ?

ການທົບທວນການຄວບຄຸມຄຸນນະພາບຂອງ FoodShare ແມ່ນການທົບທວນຄືນກ່ຽວກັບກໍລະນີ FoodShare ຂອງທ່ານເພື່ອເຮັດໃຫ້ຮັບປະກັນວ່າໜ່ວຍງານທີ່ທ່ານໄດ້ລົງທະບຽນໃນ FoodShare ໄດ້ຈ່າຍເງິນຊ່ວຍເຫຼືອຂອງທ່ານຢ່າງຖືກຕ້ອງ ແລະ ປະຕິບັດຕາມກົດລະບຽບທີ່ລັດຖະບານກາງກໍານົດ.

ການທົບທວນການຄວບຄຸມຄຸນນະພາບແມ່ນຖືກໃຊ້ໂດຍ Department of Health Services (DHS) ເພື່ອກວດເບິ່ງວ່າ:

- ໂຄງການ FoodShare ແມ່ນໄດ້ຖືກດໍາເນີນຕາມກົດໝາຍ.
- ໜ່ວຍງານຂອງທ່ານໄດ້ຈັດການກັບກໍລະນີຂອງທ່ານຢ່າງຖືກຕ້ອງ.
- ຂໍ້ມູນໃນແຟ້ມເອກະສານກໍລະນີຂອງທ່ານແມ່ນຖືກຕ້ອງ.
- ທ່ານກໍາລັງໄດ້ຮັບເງິນຊ່ວຍເຫຼືອທີ່ທ່ານມີສິດໄດ້ຮັບ.

## ເປັນຫຍັງກໍລະນີຂອງຂ້ອຍຈຶ່ງຖືກເລືອກ?

ກໍລະນີ FoodShare ຂອງທ່ານໄດ້ຖືກເລືອກໂດຍການສຸ່ມເອົາສໍາລັບການທົບທວນການຄວບຄຸມຄຸນນະພາບ. ມັນ**ບໍ່**ໄດ້ຖືກເລືອກຍ້ອນວ່າບາງສິ່ງບາງຢ່າງທີ່ທ່ານໄດ້ເຮັດ ຫຼື ບໍ່ໄດ້ເຮັດ. ຕາມການທົບທວນຄືນຂອງກໍລະນີທີ່ຄັດເລືອກໂດຍການສຸ່ມເອົາ, DHS ສາມາດຊອກຮູ້ວ່າໜ່ວຍງານຂອງທ່ານກໍາລັງດໍາເນີນໂຄງການ FoodShare ຢ່າງຖືກຕ້ອງ.

## ຂ້ອຍຈໍາເປັນຕ້ອງມີສ່ວນຮ່ວມບໍ?

ກົດໝາຍວ່າດ້ວຍລັດຖະບານກາງກ່າວວ່າ ທ່ານຕ້ອງຮ່ວມມືກັບການທົບທວນການຄວບຄຸມຄຸນນະພາບ. ຖ້າທ່ານບໍ່ໃຫ້ຂໍ້ມູນທີ່ຈໍາເປັນ ແລະ ບໍ່ຮ່ວມມືກັບການທົບທວນ, ກໍລະນີ FoodShare ຂອງທ່ານອາດຈະຖືກປິດໄດ້. ຖ້າສິ່ງນີ້ເກີດຂຶ້ນ, ທ່ານອາດຈະຖືກບອກວ່າດົນປານໃດກໍລະນີຂອງທ່ານຈະຖືກປິດ.

## ຂະບວນການທົບທວນການຄວບຄຸມຄຸນນະພາບຂອງ FoodShare ເຮັດວຽກແນວໃດ?

ຕໍ່ໄປນີ້ແມ່ນຂັ້ນຕອນຫຼັກໃນຂະບວນການທົບທວນການຄວບຄຸມຄຸນະພາບຂອງ FoodShare:

1. ຜູ້ຊ່ຽວຊານດ້ານການຄວບຄຸມຄຸນນະພາບຈະຖືກມອບໝາຍໃຫ້ເຮັດການທົບທວນຂອງກໍລະ FoodShare ຂອງທ່ານ.
2. ຜູ້ຊ່ຽວຊານຈະທົບທວນຄືນແຟ້ມເອກະສານກໍລະນີ FoodShare ຂອງທ່ານເພື່ອເບິ່ງວ່າໜ່ວຍງານທ້ອງຖິ່ນຂອງທ່ານເຮັດຫຍັງແດ່.
3. ຫຼັງຈາກຜູ້ຊ່ຽວຊານທົບທວນຄືນແຟ້ມກໍລະນີ FoodShare ຂອງທ່ານ, ລາວຈະໂທຫາທ່ານເພື່ອກໍານົດບໍ່ວ່າຈະແມ່ນການສໍາພາດແບບຊຶ່ອງໜ້າ ຫຼື ການສໍາພາດທາງໂທລະສັບ.

   **ໝາຍເຫດ:** ຖ້າຜູ້ຊ່ຽວຊານບໍ່ສາມາດຕິດຕໍ່ທ່ານເພື່ອກໍານົດການສໍາພາດໄດ້, ລາວຈະສົ່ງໜັງສືແຈ້ງການສໍາພາດໄປຍັງບ້ານຂອງທ່ານພ້ອມກັບວັນທີ ແລະ ເວລາສໍາລັບການສໍາພາດຂອງທ່ານ. ໜັງສືແຈ້ງການສໍາພາດຈະມີເບີໂທລະສັບໃຫ້ທ່ານໂທຫາ ແລະ ນັດໝາຍສໍາພາດຂອງທ່ານຄືນໃໝ່, ຖ້າຈໍາເປັນ.

4. ໃນຖານະເປັນສ່ວນໜຶ່ງຂອງການສໍາພາດ, ທ່ານຈະຖືກຂໍໃຫ້ລົງລາຍເຊັນການເປີດເຜີຍຂໍ້ມູນໃນແບບຟອມເປັນລາຍລັກອັກສອນ. ແບບຟອມນີ້ອະນຸຍາດໃຫ້ຜູ້ຊ່ຽວຊານສາມາດຕິດຕໍ່ແຫຼ່ງຂໍ້ມູນອື່ນໆ (ເຊັ່ນວ່າ ທະນາຄານ, ເຈົ້າຂອງບ້ານເຊົ່າ, ຫຼື ນາຍຈ້າງ) ເພື່ອກວດສອບຂໍ້ມູນທີ່ທ່ານໄດ້ໃຫ້ສໍາລັບການລົງທະບຽນ FoodShare ຂອງທ່ານ. ແຫຼ່ງຂໍ້ມູນເຫຼົ່ານີ້ອາດຈະຖືກຖາມເພື່ອໃຫ້ຂໍ້ມູນ, ເຊັ່ນວ່າ ໃບຢັ້ງຢືນຖານະການເງິນ ຈາກທະນາຄານ ແລະ ຫຼັກຖານການຈ້າງງານ.

   **ໝາຍເຫດ:** ອີງຕາມກົດໝາຍຂອງລັດ, ບຸກຄົນໃດໜຶ່ງ, ສະຖາບັນການເງິນ, ໜ່ວຍງານລາຍງານສິນເຊື່ອ, ນາຍຈ້າງ, ຫຼື ໂຮງຮຽນຖືກອະນຸຍາດໃນການເປີດເຜີຍຂໍ້ມູນເພື່ອກວດສອບຂໍ້ມູນທີ່ທ່ານໄດ້ໃຫ້ສໍາລັບການລົງທະບຽນ FoodShare ຂອງທ່ານ.

## ແມ່ນຫຍັງຈະເກີດຂຶ້ນຫຼັງຈາກການທົບທວນການຄວບຄຸມຄຸນະພາບຂອງ FoodShare?

ເມື່ອການສຳພາດຂອງທ່ານສຳເລັດແລ້ວ ແລະ ຜູ້ຊ່ຽວຊານໄດ້ທົບທວນຄືນຂໍ້ມູນທັງໝົດຈາກແຟ້ມເອກະສານກໍລະນີ FoodShare ຂອງທ່ານແລ້ວ, ການບັນທຶກຂໍ້ມູນສ່ວນຕົວຂອງທ່ານ, ແລະ ແຫຼ່ງຂໍ້ມູນອື່ນໆ, ຈະໄດ້ຖືກຕັດສິນໃຈວ່າເງິນຊ່ວຍເຫຼືອ FoodShare ຂອງທ່ານໄດ້ຖືກຈ່າຍຢ່າງຖືກຕ້ອງຫຼືບໍ່. ຖ້າວ່າພົບຂໍ້ຜິດພາດກ່ຽວກັບເງິນຊ່ວຍເຫຼືອຂອງທ່ານ, ໜ່ວຍງານຂອງທ່ານຈະແຈ້ງໃຫ້ທ່ານຊາບກ່ຽວກັບທຸກການປ່ຽນແປງກ່ຽວກັບເງິນຊ່ວຍເຫຼືອຂອງທ່ານ.

ທ່ານອາດມີສິດໃນການຂໍອຸທອນການປ່ຽນແປງໃດໜຶ່ງກ່ຽວກັບເງິນຊ່ວຍເຫຼືອ ຫຼື ການລົງໂທດໃດໜຶ່ງສຳລັບການບໍ່ຮ່ວມມືກັບການທົບທວນການຄວບຄຸມຄຸນະພາບ. ທ່ານຈະໄດ້ຮັບຂໍ້ມູນການອຸທອນຖ້າວ່າມີການກະທຳໃດໜຶ່ງຂອງການກະທຳເຫຼົ່ານີ້ເກີດຂຶ້ນ.

ຜົນໄດ້ຮັບຂອງການທົບທວນການຄວບຄຸມຄຸນະພາບຂອງທ່ານຖືກສົ່ງໄປຫາ U.S. Department of Agriculture Food and Nutrition Service.

## ຂ້ອຍຈຳເປັນຈະຕ້ອງເຮັດການທົບທວນການຄວບຄຸມຄຸນະພາບຂອງ FoodShare ອື່ນໆໃດໜຶ່ງບໍ?

ຜູ້ທົບທວນການຄວບຄຸມຄຸນະພາບຂອງລັດຖະບານກາງຈະທົບທວນຄືນໃໝ່ບາງກໍລະນີທີ່ໄດ້ຖືກເລືອກໂດຍການສຸ່ມເອົາ. ການທົບທວນຄືນ ໃໝ່ແມ່ນກໍລະນີທີ່ໄດ້ທົບທວນຮຽບຮ້ອຍແລ້ວໂດຍລັດທີ່ຍັງໄດ້ຖືກເລືອກເພື່ອທົບທວນຄືນໂດຍລັດຖະບານກາງ. ຖ້າກໍລະນີຂອງທ່ານຖືກເລືອກໂດຍການສຸ່ມເອົາ, ທ່ານຈຳເປັນຕ້ອງຮ່ວມມືກັບຜູ້ທົບທວນຂອງລັດຖະບານກາງຖ້າພວກເຂົາຕິດຕໍ່ຫາທ່ານ.

## ຂໍ້ມູນຂອງຂ້ອຍເປັນຄວາມລັບບໍ?

ຂໍ້ມູນທີ່ທ່ານໃຫ້ຕໍ່ຜູ້ທົບທວນຂອງລັດ ຫຼື ລັດຖະບານກາງຈະຖືກໃຊ້ໂດຍສະມາຊິກພະນັກງານຜູ້ທີ່ຈັດການບັນດາໂຄງການຊ່ວຍເຫຼືອເທົ່ານັ້ນ ເພື່ອກຳນົດສິດ ແລະ ສະມາຊິກພະນັກງານອື່ນທີ່ໄດ້ຮັບອະນຸຍາດຕາມກົດໝາຍ.

ທ່ານມີສິດເພື່ອ:

- ເບິ່ງຂໍ້ມູນສາທາລະນະ ແລະ ຂໍ້ມູນສ່ວນຕົວໃດໜຶ່ງທີ່ເກັບກຳໄວ້ກ່ຽວກັບທ່ານ.
- ຂໍ້ເທັດຈິງທີ່ທ້າທາຍໃນແຟ້ມເອກະສານກໍລະນີຂອງທ່ານທີ່ທ່ານເຊື່ອວ່າບໍ່ຖືກຕ້ອງ ຫຼື ບໍ່ສົມບູນ.
- ເບິ່ງແຟ້ມເອກະສານກໍລະນີທັງໝົດຂອງທ່ານ, ຍົກເວັ້ນບາງປະເພດຂໍ້ມູນທີ່ຖືກຈັດປະເພດຕາມກົດໝາຍເປັນຄວາມລັບ.

## ຂ້ອຍຈະສາມາດໄດ້ຮັບຂໍ້ມູນເພີ່ມເຕີມໄດ້ຢູ່ໃສ?

ເອກະສານຂໍ້ເທັດຈິງນີ້ປະກອບດ້ວຍຂໍ້ມູນທົ່ວໄປກ່ຽວກັບການທົບທວນການຄວບຄຸມຄຸນະພາບຂອງ FoodShare. ສຳລັບຂໍ້ມູນລາຍລະອຽດ, ກະລຸນາໂທຫາຜູ້ທົບທວນການຄວບຄຸມຄຸນະພາບໄດ້ທີ່ເບີທີ່ໄດ້ລະບຸໄວ້ຢູ່ໃນໜັງສືແຈ້ງການສຳພາດ. ຖ້າທ່ານບໍ່ສາມາດຊອກຫາໜັງສືແຈ້ງການຂອງທ່ານໄດ້, ໃຫ້ໂທຫາ 608-261-8321.

## ຖະແຫຼງການບໍ່ເລືອກປະຕິບັດ

ເພື່ອສອດຄ່ອງກັບກົດຫມາຍວ່າດ້ວຍສິດທິພົນລະເຮືອນຂອງລັດຖະບານກາງແລະກະຊວງກະສິກໍາສະຫະລັດ (U.S. Department of Agriculture ຫຼື USDA) ລະບຽບການສິດທິພົນລະເຮືອນແລະນະໂຍບາຍ, USDA, ທຸລະກິດຂອງຕົນ, ຫ້ອງການ, ແລະພະນັກງານ, ແລະສະຖາບັນເຂົ້າຮ່ວມໃນການຫຼືການບໍລິຫານໂຄງການ USDA ແມ່ນຖືກຫ້າມຈາກທຸກໆການຈໍາແນກເລືອກປະຕິບັດໂດຍອີງໃສ່ເຊື້ອຊາດ, ສີຜິວ, ຊາດກໍາເນີດ, ເພດ, ສາດສະຫນາ, ຄວາມພິການ, ອາຍຸສູງສຸດ, ຄວາມເຊື່ອຖືທາງດ້ານການເມືອງ, ຫຼືຖືກແກ້ແຄ້ນຫຼືການໂຕ້ຕອບກ່ຽວກັບ ກິດຈະກໍາສິດທິພົນລະເຮືອນກ່ອນໃນໂຄງການ ຫຼືກິດຈະກໍາດໍາເນີນການ ຫຼືທີ່ໄດ້ຮັບການສະຫນັບສະຫນູນໂດຍ USDA.

ຜູ້ຄົນພິການທີ່ຮຽກຮ້ອງໃຫ້ມີວິທີການທາງເລືອກຂອງການສື່ສານເພື່ອຂໍ້ມູນຂອງໂຄງການ (ເຊັ່ນ: ພາສາ Braille, ຕົວພິມຂະຫນາດໃຫຍ່, ເທັບສຽງ, ພາສາມືອາເມຣິກາ, ແລະອື່ນໆ), ຄວນຈະຕິດຕໍ່ຫາອົງການ (ພາກລັດຫຼືຂອງທ້ອງຖິ່ນ) ບ່ອນທີ່ເຂົາເຈົ້ານໍາໃຊ້ຮຽກຮ້ອງຂໍຜົນປະໂຫຍດ. ບຸກຄົນຜູ້ທີ່ເປັນຄົນຫູຫນວກ, ມີການໄດ້ຍິນລໍາບາກ ຫຼືປາກກືກ ອາດຈະຕິດຕໍ່ຫາ USDA ຜ່ານບໍລິການຖ່າຍທອດລັດຖະບານກາງ (Federal Relay Service) ທີ່ (800) 877-8339. ນອກຈາກນີ້, ຂໍ້ມູນຂ່າວສານໂຄງການອາດມີຢູ່ໃຫ້ໃນພາສາອື່ນໆ

ເພື່ອຍື່ນຄໍາຮ້ອງທຸກທີ່ກ່ຽວກັບການຈໍາແນກເລືອກປະຕິບັດ, ສໍາເລັດແບບຟອມການຮ້ອງຮຽນ USDA Program Discrimination, (AD, 3027) ພົບອອນໄລນ໌ໄດ້ທີ່ເວັບ: How to File a Complaint, ແລະມີໃຫ້ຢູ່ໃນທຸກທີ່ທໍາການ USDA, ຫຼືຂຽນຈົດຫມາຍໄປເຖິງ USDA ແລະຂຽນຂໍ້ມູນ ທີ່ຕ້ອງໃສ່ໃນແບບຟອມການຮ້ອງຮຽນຮວມຢູ່ໃນຈົດຫມາຍດ້ວຍ. ເພື່ອຂໍເອົາສໍາເນົາແບບຟອມ, ໃຫ້ໂທຫາ **(866) 632-9992**. ຍື່ນສົ່ງແບບຟອມທີ່ສໍາເລັດແລ້ວຂອງທ່ານຫຼືສົ່ງຈົດຫມາຍໄປທີ່ USDA ໂດຍ:

(1) ສົ່ງທາງໄປສະນີ: U.S. Department of Agriculture
Office of the Assistant Secretary for Civil Rights
1400 Independence Avenue, SW
Washington, D.C. 20250-9410;

(2) ທາງແຟັກ: (202) 690-7442; ຫຼື

(3) ທາງອີເມວ: program.intake@usda.gov

ສະຖາບັນນີ້ແມ່ນເປັນທີ່ໃຫ້ໂອກາດເທົ່າທຽມກັນ.